# ນິທານລາວ

## ນິທານ ກວາງ ເຕົ່າ ແລະ ນົກແຊວ

ແຕ່ກ່ອນມີກວາງ, ເຕົ່າ ແລະ ນົກແຊວ ເປັນເພື່ອນທີ່ດີຕໍ່ກັນ ເມື່ອຈະໄປຫາກິນທາງໃດນົກແຊວກໍເປັນຜູ່ບິນເບິ່ງສະຖານທີ່ ທີ່ຈະໄປຊອກຫາກິນນັ້ນວ່າມີນາຍພານ ຫຼື ສັດຮ້າຍບໍ່ ແລ້ວຈຶ່ງພາກັນໄປ. ນົກແຊວບິນໄປ ສ່ວນກວາງ ກໍໃຊ້ປາກຄາບເອົາເຕົ່າໄປນຳ ເພາະເຫັນເຕົ່າຍ່າງຊ້າໂພດ.

ມື້ນຶ່ງ, ໃນຂະນະທີ່ພວມຫາກິນຢູ່ນັ້ນ ກວາງເລີຍຖືກແຮ້ວນາຍພານຫ້າງເອົາໄວ້ ມັນຈະດີ້ນຮົນປານໃດເຊືອກທີ່ຮັດເອົາຂານັ້ນກໍບໍ່ຂາດ. ນົກແຊວຜູ່ມີປັນຍາກໍບອກເຕົ່າໃຫ້ພຍາຍາມກັດເຊື້ອແຮ້ວ ສ່ວນມັນເອງກໍບິນໄປຫາບ້ານຂອງນາຍພານ ເພື່ອຫາວິທີບໍ່ໃຫ້ນາຍພານອອກເຮືອນມາຢາມແຮ້ວງ່າຍໆ, ພໍໄປເຖິງແຄມບ້ານມັນກໍເຫັນນາຍພານພາຍຖົງ, ມືຖືຫອກອອກຈາກບ້ານ ເພື່ອຈະໄປຢາມແຮ້ວ ນົກແຊວກໍຟ້າວບິນແສ່ວໄປແສ່ວມາເທິງຫົວນາຍພານ ຈົນລາວຮູ້ສຶກແປກປລາດ ຖ້າຈະອອກຈາກບ້ານໄປ ກໍຢ້ານເກີດມີເຫດຮ້າຍ ເພາະເຊື່ອໃຈວ່ານົກໂຕນີ້ມາບອກເຫດອັນບໍ່ດີ.

ເຕົ່າໄດ້ເວລາຕື່ນກໍຕັ້ງໃຈກັດແຮ້ວຕໍ່ໄປ. ສ່ວນນາຍພານຫາຍາມໃໝ່ໄດ້ຈຶ່ງອອກເຮືອນ. ພໍມາເຖິງກາງປ່າ ລາວກໍພົບນົກແຊວໂຕເກົ່ານັ້ນບິນລັດໜ້າລັດຫຼັງຢູ່ອີກ ນາຍພານກໍຄິດສົງໄສຕໍ່ການກະທຳຂອງນົກແຊວໂຕນັ້ນ ແລ້ວລາວກໍຍ່າງຕໍ່ໄປຫາບ່ອນທີ່ລາວຫ້າງແຮ້ວໄວ້ນັ້ນ ເລີຍໄປເຫັນກວາງຖືກແຮ້ວຢູ່. Iາວກໍມີຄວາມດີໃຈ ເລີຍຫຼົງຮ້ອງຂຶ້ນວ່າ : ໂຫ ! ໂຊກຂອງກູເກີດແລ້ວ ເມື່ອກວາງໄດ້ຍິນສຽງຄົນຮ້ອງແນວນັ້ນ ມັນກໍໂດດໝົດແຮງເຊືອກແຮ້ວທີ່ເຕົ່າກັດຢູ່ນັ້ນກໍຂາດ ແລະ ກວາງກໍພົ້ນຈາກອັນຕລາຍໄປໄດ້ ຍັງເຫຼືອແຕ່ເຕົ່າທີ່ຍັງຄາບເຊືອກແຮ້ວຢູ່. ນາຍພານຄິດຄຽດໃຫ້ເຕົ່າວ່າ ຍ້ອນເຕົ່ານີ້ ແຫຼະກັດເຊືອກແຮ້ວກວາງຈຶ່ງໜີໄປໄດ້, ນາຍພານກໍເລີຍຈັບເຕົ່າມາຍັດໃສ່ຖົງເມື່ອນົກແຊວເຫັນແນວນັ້ນ ກໍຟ້າວບອກໃຫ້ກວາງທຳທ່າເຮັດຂາຫັກຍ່າງລຸກຍ່າງລົ້ມໄປເພື່ອໃຫ້ນາຍພານໄລ່ນຳ, ນາຍພານເຫັນແນວນັ້ນກໍເອົາຖົງຫ້ອຍໃສ່ງ່າໄມ້ໄວ້ແລ້ວກໍແລ່ນນຳກວາງ. ກວາງແລ່ນອ້ອມວຽນມາຫາບ່ອນນາຍພານເອົາຖົງໃສ່ເຕົ່າເກາະໄວ້ ມັນກໍເອົາເຂົາເກາະໃສ່ສາຍຖົງຂອງນາຍພານທີ່ປະໄວ້ ແລ້ວກໍແລ່ນໜີຢາງໄວ.

ໃນທີ່ສຸດ ກວາງ, ເຕົ່າ ແລະ ນົກແຊວ ກໍຊ່ວຍເຫຼືອກັນຈົນພົ້ນຈາກຄວາມອັນຕລາຍໄດ້ . ນີ້ແຫຼະເພີ່ນວ່າ : ຮ່ວມກັນເຮົາຢູ່ ແຍກໝູ່ເຮົາຕາຍ.